ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ສັບບທີ ໔໑໔ ປພຖຊ/ ໐໓໖໗໐໗**

# ບົດຄວາມ

## ພັກຣັດ ຕ້ອງຢຸດຕິປາບປາມປະຊາຊົນ

ພັກຣັດ ຕ້ອງຢຸດຕິປາບປາມນັກຕໍ່ສູ້ ເພື່ອເສຣີປະຊາທິປະໄຕລາວ ແລະອ້າຍເອື້ອຍນ້ອງ ໃນຖິ່ນແຖວ. ພັກຣັດ ຕ້ອງຢຸດຕິ ການຂາຍຊາດຂາຍປະຊາຊົນ ແລະຢຸດຕິ ການລະເມີດ ຕໍ່ສິດທິມະນຸດໂດຍໄວ, ເພາະບໍ່ແມ່ນຫົນທາງແກ້ໄຂບັນຫາຊາດ ທີ່ມີຢູ່ໃນປະຈຸບັນນີ້ ໃຫ້ສິ້ນສຸດລົງໄດ້.

ແຜນຍຸດທະສາດ ໃນການປາບປາມການຕໍ່ສູ້ ຂອງປະຊາຊົນ ລ້ວນແລ້ວແຕ່ໄດ້ຮັບ ຄວາມປຣາໄຊ ຫລົ້ມເຫລວທັງນັ້ນ; ເປັນຕົ້ນ, ແຜນການຕອບຕ້ານ ຫັນປ່ຽນໂດຍສັນຕິ, ແຜນການຢືມມືຄົນລາວນອກປະເທດ ທັບມ້າງກັນເອງ, ແຜນການປາບປາມດັບສູນນັກຕໍ່ສູ້ ໃຫ້ໝົດລົງໃນປີ 2003 ກໍລ້ວນແລ້ວແຕ່ ໄດ້ຮັບຄວາມປຣາໄຊ ຢ່າງຢັບເຢີນ.

ພັກຣັດ ປຣາໄຊໃນແຜນຍຸທສາດຕອບຕ້ານການຕໍ່ສູ້ ຢູ່ນອກປະເທດ ແລະຢູ່ຕາມຊາຍແດນລາວ-ໄທຍ ໝົດທຸກຢ່າງ. ດຽວນີ້, ຖອຍເຂົ້າມາປ້ອງກັນຕົວຢູ່ພາຍໃນປະເທດເອງ ດ້ວຍການໃຊ້ມາຕການກວດລ້າງນັກຕໍ່ສູ້ປະກອບອາວຸດ ຕໍ່ຕ້ານຣັຖບານ ດ້ວຍການໃຫ້ຣາງວັນ ແກ່ຄາຕກອນ. ຜູ້ໃດ ຂ້າໄດ້ນຶ່ງຄົນ, ກໍມີການເລື່ອນຊັ້ນ, ມີການໃຫ້ເຂົ້າເປັນສາມະຊິກພັກພື້ນຖານ ຢ່າງອັຕໂນມັດ ແລະໃຫ້ເງິນສົດ 6 ລ້ານກີບ.

ການປາບປາມດັບສູນປະຊາຊົນ ໃນຊາດຂອງຕົນເອງ ແບບໄຮ້ມະນຸສທັມຄືດັ່ງນີ້, ຈຶ່ງເຮັດໃຫ້ບັນດາປະເທດຕ່າງ ທີ່ຮັກຄວາມມີມະນຸສທັມ ແລະເຄົາຣົບ ຕໍ່ສິດທິເສຣີພາບ ຂອງມວນມະນຸດ ເຊັ່ນ : ສະຫະຣັດອະເມຣິກາ, ຕລາວຮ່ວມຢູຣົບ ແລະອົງການ ທີ່ບໍ່ຂຶ້ນກັບຣັຖບານກ່ຽວກັບການ

ເຄົາລົບຕໍ່ສິດທິເສລີພາບ ໄດ້ອອກມາປະນາມ ຢ່າງຮຸນແຮງ ແລະບີບຮັດ ໃຫ້ພັກຣັດ ຕ້ອງຢຸດຕິ ການລະເມີດສິດທິທະນຸດ ຢ່າງໂຫດຮ້າຍປ່າເຖື່ອນນັ້ນໂດຍໄວ.

ສນັ້ນ, ພັກຣັດ ຕ້ອງທົບທວນຄືນໃໝ່, ພັກຣັດ ເຮັດການຕໍ່ສູ້ມາໄດ້ 30 ປີ ແລະພັກຣັດ ກໍໄດ້ຂຶ້ນຄອງອຳນາດມາແລ້ວ 31 ປີ. ນ້ຳໃຈຮັກຊາດແພງເຊື້ອ, ນ້ຳໃຈຕໍ່ສູ້ເພື່ອຄວາມເປັນຊາດ ເອກຣາດ, ເພື່ອຜົນປໂຍດ ຂອງຊາດ ຂອງປະຊາຊົນນັ້ນ ແມ່ນບໍ່ຍັງເຫລືອຈັກໜ່ອຍເລີຍ!... ແຕ່ນ້ຳໃຈກອບໂກຍ, ຂາຍຊາດ ຂາຍປະຊາຊົນຊ້ຳພັດຖືບຕົວຂຶ້ນສູງສຸດຂີດ.

ດ້ວຍເຫດນີ້ເອງ, ພັກຣັດ ຕ້ອງປ່ຽນຣັຖບານໂດຍໄວ ກ່ອນທີ່ຈະໝົດໂອກາດ. ຍິ່ງພັກຣັດ ເມີນເສີຍ ຕໍ່ຄວາມຮຽກຮ້ອງຕ້ອງການ ຂອງປະຊາຊົນ ແລະສາກົນຫລາຍເທົ່າໃດ... ກໍຍິ່ງຈະເຮັດ ໃຫ້ພັກຣັດ ເສັຽໂອກາດດີ ແລະພົບກັບຄວາມປຣາໄຊ ຫລາຍຂຶ້ນເທົ່ານັ້ນ.

ພວກເຮົາ ປະຊາຊົນພັກ ແລະກຳລັງທັບ ເສຣີປະຊາທິປະໄຕລາວ ບໍ່ແມ່ນພວກຖືລັດທິ **ສວຍໂອກາດ** ຄືດັ່ງພັກຣັດ ໄດ້ກ່າວຫາວ່າ "**ເຫັນອົງການຈັດຕັ້ງສາກົນ ແລະຕ່າງປະເທດບີບຮັດ ພັກຣັດຫລາຍເທົ່າໃດ...ພວກເຮົາ ກໍຍິ່ງສວຍໂອກາດ ກ່າວປະນາມ ໂຈມຕີພັກຣັດ ຊ້ຳເຕີມຂຶ້ນ ຫລາຍເທົ່ານັ້ນ...**" ຕຣົງກັນຂ້າມ, ພວກເຮົາ ໄດ້ຮຽກຮ້ອງໃຫ້ພັກຣັດ ອອກມາໂອ້ລົມກັບພວກເຮົາ ເພື່ອສ້າງຄວາມສາມະຄີປອງດອງຊາດ, ພ້ອມກັນແກ້ໄຂບັນຫາຊາດ ທີ່ມີຢູ່ ໃຫ້ສຳເຣັດລົງໂດຍໄວ, ພ້ອມທັງໄດ້ສເນີ ໃຫ້ພັກຣັດຮູ້ ວ່າ "ພວກເຮົາ ມີຄວາມສາມາດ ໃຫ້ການຊ່ວຍເຫລືອ ທາງດ້ານ ທຶນຮອນ ແລະອຸປກອນຕ່າງໆ ເປັນມູນຄ່າເຖິງ 67 ລ້ານດອນລາສະຫະຣັດ ເພື່ອພັທນາປະຊາທິ ປະໄຕ ແລະເງິນຈຳນວນນີ້, ບໍ່ໄດ້ຜ່ານ IMF ເພາະບໍ່ແມ່ນເງິນຂອງຣັຖບານ. ມັນແມ່ນເງິນ ຂອງປະຊາຊົນ ຈີນ, ປະຊາຊົນອະເມຣິກາ, ປະຊາຊົນ ຝຣັ່ງເສດ, ປະຊາຊົນໄທຍ, ປະຊາຊົນ ມາເລເຊັຽ, ປະຊາຊົນ ສິງກະໂປ, ປະຊາຊົນບຣູນັຍ, ປະຊາຊົນ ໃຕ້ຫວັນ ທີ່ຢາກເຫັນລາວສອງ ຝ່າຍ ສຳເຣັດການສ້າງຄວາມສາມະຄີປອງດອງຊາດ, ພ້ອມກັນນຳເອົາສິດທິເສຣີພາບອັນແທ້ຈິງ ແລະສັນຕິສຸຂອັນຍາວນານ ມາສູ່ປະຊາຊົນລາວທັງຊາດ.

ແຕ່ພັກຣັດ ກໍເມີນເສີຍ, ກົ້ມໜ້າຂາຍຊາດ ຂາຍປະຊາຊົນ, ຄ້າຢາເສບຕິດ, ຄ້າມະນຸດ, ຄ້າໄມ້ເຖື່ອນໃຫ້ ວຽດນາມ, ທຳລາຍສະພາບແວດລ້ອມ ແລະບໍ່ເອົາໃຈໃສ່ ແກ້ໄຂເຍົາວະຊົນ ທີ່ມີບັນຫາ. ພາກັນສໍ້ຣາດບັງຫລວງ ແລະນຳເອົາເງິນ ອອກໄປຝາກໄວ້ທະນາຄານຕ່າງປະເທດ, ເປັນຕົ້ນ: ໃນປີ 1998 ຜູ້ຝາກ 30 ລ້ານດອນລາສະຫະຣັດ ຂຶ້ນໄປ ມີ 4 ທ່ານ, ຜູ້ຝາກແຕ່ 10-30 ລ້ານມີ15 ທ່ານ ແລະຜູ້ຝາກແຕ່1-10 ລ້ານມີ45 ທ່ານ ແລະໃນປະຈຸບັນນີ້, ນອກຈາກ ຝາກໄວ້ທະນາຄານຕ່າງປະເທດແລ້ວ, ຍັງພາກັນເອົາເງິນ ອອກໄປຄ້າຢູ່ ວຽດນາມ ແລະຢູ່ໄທຍອີກ.

ປະຊາຊົຊົນລາວ ຂໍຖາມພັກຣັດວ່າ "ເງິນຕຣາຕ່າງປະເທດ ຢ່າງຫລວງຫລາຍ ທີ່ 5 ປະເທດ ຄ້ຳປະກັນເງິນກີບ ຂອງລາວ ກ່ອນການເຂົ້າມາມີອຳນາດນັ້ນ...ພັກຣັດ ເອົາໄປໄວ້ໃສ? ເງິນເຫລົ່ານັ້ນ ແມ່ນເງິນ ຂອງປະຊາຊົນລາວ ແລະພວກເຮົາ ກໍຂໍຮຽກຮ້ອງ ໃຫ້ບັນດາປະເທດ ທີ່ຄ້ຳປະກັນເງິນ ກີບຂອງລາວ ໃນເມື່ອກ່ອນນັ້ນ ໄດ້ທວງຖາມພັກຣັດ ວຽງຈັນນຳດ້ວຍ.

ເຖິງຢ່າງໃດກໍຕາມ, ຄວາມຫລ້າຫລັງຂອງປະເທດຊາດ ທີ່ມີຢູ່ໃນປະຈຸບັນນີ້ ບໍ່ໄດ້ເກີດມາຈາກປະຊາຊົນ; ແຕ່ມັນເກີດມາຈາກພັກຣັດຕ່າງຫາກ! ທີ່ຕົກຖືກກົນລວງຂອງຊາດຕ່າງດ້າວຢ່າງມືດມິດຈົນຂາດສະຕິ!..ບໍ່ເຂົ້າໃຈປະຊາຊົນໃນຊາດຂອງຕົນເອງ ແລະພວກເຂົາ ກໍມີຄວາມຕ້ອງການຢາກໄດ້ຣັຖບານ ທີ່ເຂົາໃຈພວກເຂົາຫລາຍທີ່ສຸດ!.

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ກອງວິຈັຍ**
**ວັນທີ ໒໗ ມີນາ ໒໐໐໙.**